# ສົມໂພດແມ່ພຣະຖືກຍົກຂຶ້ນສະຫວັນທັງກາຍແລະວິນຍານ
## ວັນທີ 15 ສິງຫາ 2018



**ພຣະວໍລະສານໂດຍນັກບຸນລູກາ 1, 39-56**

ໃນເວລານັ້ນ, ພຣະນາງມາຣີອາຟ້າວລຸກຂຶ້ນອອກເດີນທາງໄປເມືອງແຫ່ງໜຶ່ງໃນແຖບພູເຂົາແຂວງຢູເດອາ. ພຣະນາງເຂົ້າໃນເຮືອນຂອງຊາກາຣີອາແລະຄຳນັບຖາມຂ່າວນາງເອຣີຊາແບັດ. ເມື່ອນາງເອຣີຊາແບັດໄດ້ຍິນຄຳຖາມຂ່າວນີ້ ບຸດໃນອຸທອນຂອງນາງກໍດິ້ນດັນ. ນາງເອຣີຊາແບັດເຕັມພຽບດ້ວຍພຣະຈິດເຈົ້າຈຶ່ງຮ້ອງຂຶ້ນວ່າ: ພຣະນາງມີບຸນລື່ນຍິ່ງໃດໆ ແລະບຸດອຸທອນພຣະນາງເປັນເຈົ້າຈອມບຸນ. ເຫດໃດພຣະມານດາຂອງພຣະອົງເຈົ້າຂອງຂ້າພະເຈົ້າຈຶ່ງສະເດັດມາຫາຂ້າພະເຈົ້າດັ່ງນີ້? ແຕ່ພໍຄຳຖາມຂ່າວຂອງພຣະນາງເຖິງຫູຂ້າພະເຈົ້າ ບຸດໃນອຸທອນຂອງຂ້າພະເຈົ້າກໍໂດດເຕັ້ນຍິນດີ. ພຣະນາງມີບຸນລາບຍ້ອນໄດ້ເຊື່ອວ່າສິ່ງທີ່ພຣະເປັນເຈົ້າໄດ້ກ່າວກັບພຣະນາງນັ້ນຈະສຳເລັດບໍລິບູນ.

ພຣະນາງມາຣີອາຈຶ່ງກ່າວວ່າ: ວິນຍານຜູ້ຂ້າຮ້ອງສັນລະເສີນພຣະເຈົ້າ. ຈິດໃຈຜູ້ຂ້າມ່ວນຊື່ນຍິນດີໃນພຣະເປັນເຈົ້າຜູ້ເປັນພຣະມະຫາໄຖ່ຂອງຜູ້ຂ້າ. ດ້ວຍວ່າ, ພຣະອົງໄດ້ຫລຽວເບິ່ງສາວໃຊ້ຜູ້ຕ່ຳນ້ອຍຂອງພຣະອົງ. ຈຶ່ງແຕ່ນີ້ໄປ, ທຸກຊາດທຸກເຊັ່ນຈະເອີ້ນຜູ້ຂ້າວ່າຜູ້ມີບຸນ. ຍ້ອນວ່າ ພຣະເຈົ້າຜູ້ຊົງລິດທານຸພາບໄດ້ທຳສິ່ງມະຫັດສະຈັນໃນຕົວຜູ້ຂ້າ ແລະພຣະນາມຂອງພຣະອົງເປັນພຣະນາມສັກສິດ. ພຣະອົງໄດ້ຊົງເມດຕາກາລຸນາຕໍ່ຜູ້ຢ້ານຈຽມພຣະອົງຕະຫລອດທຸກເວລາທຸກເມື່ອ. ພຣະອົງຊົງແຜງລິດພຣະຫັດຂອງພຣະອົງແລະຜາບພວກມັກໃຫຍ່ໄຝ່ສູງໃຫ້ແຕກກະຈາຍໄປ. ພຣະອົງໄດ້ປົດຜູ້ມີອຳນາດລົງຈາກບັນລັງແລະຍົກຍໍຜູ້ຕ່ຳນ້ອຍຂຶ້ນ. ຜູ້ຫອດຫິວ, ພຣະອົງທານໃຫ້ຮັ່ງມີ. ຜູ້ເສດຖີ ພຣະອົງໄລ່ໜີໄປມືເປົ່າ. ຍ້ອນລຳລຶກເຖິງພຣະເມດຕາກາລຸນາຂອງພຣະອົງ ພຣະອົງຈຶ່ງອຸ້ມຊູອິສຣາແອນຄົນໃຊ້ຂອງພຣະອົງ. ດັ່ງທີ່ພຣະອົງໄດ້ສັນຍາໄວ້ກັບບັນພະບຸລຸດຂອງພວກເຮົາ ກັບອາບຣາຮາມແລະລູກຫລານຂອງທ່ານຕະຫລອດໄປ.

ພຣະນາງມາຣີອາໄດ້ພັກເຊົາຢູ່ກັບນາງເອຣີຊາແບັດປະມານສາມເດືອນ ແລ້ວຈຶ່ງຫລົບເມືອເຮືອນຂອງຕົນ. ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ລກ 1, 39-56**

ໃນວັນສົມໂພດແມ່ພຣະຖືກຍົກຂຶ້ນສະຫວັນທັງກາຍແລະວິນຍານ ພຣະກຣິສຕະຈັກໃຫ້ພວກເຮົາພ້ອມກັບແມ່ພຣະສັນລະເສີນພຣະເຈົ້າເຖິງພຣະຄຸນອັນຍິ່ງໃຫຍ່ທີ່ພຣະເຈົ້າໄດ້ຊົງກະທຳຜ່ານທາງຕົວແມ່ພຣະໃນບົດເພງ Magnificat .ເນື້ອຫາຂອງບົດເພງນີ້ກ່າວເຖິງຄວາມຍິນດີຂອງແມ່ພຣະທັງກາຍແລະວິນຍານທີ່ສັນລະເສີນພຣະເຈົ້າ ຍ້ອນພຣະອົງໄດ້ຍົກຍໍສິ່ງສ້າງທີ່ຕ່ຳນ້ອຍຂອງພຣະອົງຂຶ້ນສູງ. ເມື່ອກ່າວເຖິງຄວາມຍິນດີ, ພໍ່ກໍຕັ້ງຄຳຖາມຂຶ້ນມາຖາມຕົວເອງວ່າ:

- ຄວາມຍິນດີຂອງແມ່ພຣະໃນວັນນີ້ແມ່ນຫຍັງ?
- ຄວາມຍິນດີຂອງພວກເຮົາຜູ້ເປັນລູກຂອງແມ່ພຣະແມ່ນຫຍັງ?
- ຄວາມຍິນດີຂອງແມ່ພຣະຈະກາຍເປັນຄວາມຍິນດີຂອງພວກເຮົາໄດ້ຫລືບໍ?

ພໍ່ກັບພວກເຮົາຈະຊ່ວຍກັນຊອກຫາຄຳຕອບຂອງຄຳຖາມເຫລົ່ານີ້ໃນວາຈາຂອງພຣະເຈົ້າ ໂດຍເລີ່ມຈາກຄຳຖາມທີໜຶ່ງວ່າ:

- ຄວາມຍິນດີຂອງແມ່ພຣະໃນວັນນີ້ແມ່ນຫຍັງ?

ຫລາຍຄົນກໍຈະຕອບພໍ່ວ່າ: ຄວາມຍິນດີທຳອິດແລະສຳຄັນຂອງແມ່ພຣະຄືການປະຕິສົນທິລະມົນທິນ, ການເກີດມາໂດຍປາດສະຈາກບາບກຳເນີດ. ແລະຄວາມຍິນດີຕໍ່ມາຂອງແມ່ພຣະຄືການທີ່ແມ່ພຣະຖືກເລືອກສັນໃຫ້ເປັນມານດາພຣະບຸດຂອງພຣະເຈົ້າ. ແລະທ້າຍສຸດ, ຄວາມຍິນດີຂອງແມ່ພຣະຄືເວລາແມ່ສິ້ນຊີວິດຮ່າງກາຍຂອງແມ່ພຣະບໍ່ໄດ້ສູນເສຍ ແຕ່ໄດ້ຖືກຍົກຂຶ້ນສະຫວັນທັງກາຍແລະວິນຍານຊຶ່ງພວກເຮົາສະຫລອງສົມໂພດໃນວັນນີ້.

ແນ່ນອນ, ທຸກສິ່ງທີ່ກ່າວມາຂ້າງເທິງນີ້ລ້ວນແຕ່ຖືກຕ້ອງຕາມຄຳສອນແລະຫລັກຄວາມເຊື່ອທີ່ພວກເຮົາໄດ້ຮັບ. ແຕ່ວັນນີ້, ພໍ່ຢາກເຊີນຊວນພວກເຮົາໃຫ້ເຂົ້າໃຈເລິກໄປກວ່ານັ້ນອີກ. ໂດຍຖາມຕົວເອງວ່າ: ສິ່ງທີ່ພວກເຮົາຍົກຂຶ້ນມາຂ້າງເທິງນີ້ມີຕົ້ນກຳເນີດຫລືທີ່ມາຈາກໃສ? ມາຈາກຕົວຂອງແມ່ພຣະ ຫລືມາຈາກຜູ້ທີ່ໄດ້ສ້າງແມ່ພຣະມາ ຄືອົງພຣະຜູ້ເປັນເຈົ້າ.

ພວກເຮົາຮູ້ຢູ່ບໍວ່າ ສິ່ງທີ່ທຳໃຫ້ແມ່ພຣະເປັນຜູ້ມີບຸນລົ້ນຍິ່ງໃດໆໃນໂລກແມ່ນຫຍັງ? ຫລາຍຄົນກໍຈະຕອບພໍ່ວ່າ: ສິ່ງທີ່ທຳໃຫ້ແມ່ພຣະເປັນຜູ້ມີພຣະຄຸນຍິ່ງໃຫຍ່ນັ້ນຄື ຄວາມເຊື່ອທີ່ໝັ້ນຄົງຂອງແມ່ພຣະໃນພຣະເຈົ້າ. ແລະການທີ່ແມ່ພຣະເປັນຜູ້ນົບນອບແລະສຸພາບຖ່ອມຕົນ. ການທີ່ແມ່ພຣະເປັນຜູ້ເກັບເອົາວາຈາຂອງພຣະເຈົ້າມາລຳເພີງຢູ່ໃນໃຈແລະນຳໄປປະຕິບັດໃຫ້ເກີດຜົນ. ທຸກສິ່ງທີ່ກ່າວມານັ້ນລ້ວນແຕ່ຖືກຕ້ອງ. ແຕ່ພວກເຮົາລືມໄປຢ່າງໜຶ່ງທີ່ສຳຄັນຄື: ການທີ່ແມ່ພຣະມີພຣະຄຸນອັນຍິ່ງໃຫຍ່ນັ້ນ ເພາະແມ່ພຣະມີ**ພຣະເຈົ້າສະຖິດຢູ່ນຳ.**

ພວກເຮົາທຸກຄົນທີ່ຢູ່ໃນທີ່ນີ້ລ້ວນແຕ່ມີຄວາມສັດທາຕໍ່ແມ່ພຣະແມ່ນບໍ? ພວກເຮົາລ້ວນແຕ່ສວດສາຍປະຄຳເປັນປະຈຳແມ່ນບໍ? ແລະບົດຈຳເລີນດີພຣະນາງມາຣີອາທີ່ພວກເຮົາສວດນັ້ນວ່າຢ່າງໃດ? ພວກເຮົາສວດວ່າ: « ຈຳເລີນດີພຣະນາງມາຣີອາ ຜູ້ພຣະຄຸນເຕັມພຽບ **ພຣະເຈົ້າຢູ່ນຳ** ». ໝາຍຄວາມວ່າ:

ການທີ່ແມ່ພຣະມີບຸນຍິ່ງໃຫຍ່ນັ້ນ ເພາະພຣະເຈົ້າສະຖິດຢູ່ກັບແມ່. ດັ່ງນັ້ນ, ຄວາມຍິນດີຂອງແມ່ພຣະໃນວັນນີ້ຄືໄດ້ຢູ່ຮ່ວມກັບພຣະເຈົ້າໃນອານາຈັກສະຫວັນ.

ບັດນີ້, ພວກເຮົາມາຊອກຫາຄຳຕອບທີສອງທີ່ວ່າ:

- ຄວາມຍິນດີຂອງພວກເຮົາຜູ້ເປັນລູກຂອງແມ່ພຣະແມ່ນຫຍັງ?

ພວກເຮົາເຂົ້າໃຈແລ້ວວ່າ: ຄວາມຍິນດີທຸກຢ່າງຂອງແມ່ພຣະລ້ວນແຕ່ມີຕົ້ນກຳເນີດມາຈາກພຣະເຈົ້າ ແລະບໍ່ໄດ້ມາຈາກແມ່ພຣະເອງ. ສ່ວນພວກເຮົາ, ຄວາມຍິນດີຂອງພວກເຮົາແມ່ນຫຍັງ? ແລະມາຈາກໃສ?

ຄວາມຍິນດີຂອງພວກເຮົາອາດຈະເປັນການມີຊັບສົມບັດຫລາຍ. ມີເຮືອນຫລັງໃຫຍ່ໆແລະມີລົດຄັນງາມໆ. ຄວາມຍິນດີຂອງພວກເຮົາອາດຈະແມ່ນການຖືກຫວຍ, ຖືກເລກ. ຄວາມຍິນດີຂອງພວກເຮົາອາດຈະແມ່ນການທີ່ມີຄວາມຮູ້ສູງ, ມີຖານະດີ, ມີວຽກງານທີ່ດີໃນສັງຄົມ. ຄວາມຍິນດີຂອງພວກເຮົາອາດຈະແມ່ນການທີ່ໄດ້ແຟນຫລໍ່ໆ, ງາມໆ. ຄວາມຍິນດີຂອງພວກເຮົາອາດຈະແມ່ນການມີຊີວິດຍືນຍາວ. ແລະອື່ນໆ.

ບັດນີ້, ໃຫ້ພວກເຮົາສັງເກດເບິ່ງວ່າ ຄວາມຍິນດີຂອງພວກເຮົາເຫລົ່ານີ້ມີຕົ້ນກຳເນີດມາຈາກໃສ? ມາຈາກພຣະເຈົ້າ, ຫລືມາຈາກການຫລອກລວງຂອງຜີປີສາດ, ຫລືມາຈາກການມັກໄດ້ຂອງພວກເຮົາເອງ? ພໍ່ຄິດວ່າພວກເຮົາແຕ່ລະຄົນສາມາດໃຫ້ຄຳຕອບກັບຕົວເອງໄດ້.

ເພາະສະນັ້ນ, ພໍ່ຈະຂ້າມມາຄຳຖາມທີສາມທີ່ໄດ້ຕັ້ງໄວ້ຕອນຕົ້ນວ່າ:

- ຄວາມຍິນດີຂອງແມ່ພຣະຈະກາຍມາເປັນຄວາມຍິນດີຂອງພວກເຮົາໄດ້ຫລືບໍ?

ຄວາມຍິນດີຂອງແມ່ພຣະຄືການທີ່ພຣະເຈົ້າສະຖິດຢູ່ກັບພຣະແມ່. ແລະພວກເຮົາສາມາດມີຄວາມຍິນດີເໝືອນກັບແມ່ພຣະໄດ້ບໍ? ຄຳຕອບຄື: « ໄດ້ ». ແຕ່ດ້ວຍວິທີໃດ? ດ້ວຍການທີ່ພວກເຮົາໃຫ້ວາຈາຂອງພຣະເຈົ້າຢູ່ໃນໃຈ, ໃນຄວາມຄິດ, ໃນຄຳເວົ້າ ແລະໃນການກະທຳຂອງພວກເຮົາ. ເພື່ອວ່າວາຈານັ້ນຈະໄດ້ກາຍເປັນເນື້ອ, ເປັນເລືອດ, ເປັນຊີວິດຂອງພວກເຮົາ. ເພື່ອພວກເຮົາຈະໄດ້ເປັນໜຶ່ງດຽວສະໜິດສຳພັນກັບພຣະເຈົ້າໃນຊີວິດຂອງພວກເຮົາ. ເພາະຖ້າພຣະເຈົ້າຢູ່ກັບພວກເຮົາແລ້ວ ພວກເຮົາກໍຈະໄດ້ຢູ່ກັບພຣະເຈົ້າທັງກາຍແລະວິນຍານ ເໝືອນກັບແມ່ພຣະຊຶ່ງພວກເຮົາສະຫລອງສົມໂພດໃນວັນນີ້.

ດັ່ງນັ້ນ, ໃນວັນສົມໂພດນີ້, ຜູ້ທີ່ເປັນຈຸດໃຈກາງແລະສຳຄັນ, ຜູ້ທີ່ເປັນພະເອກຂອງງານຄື: ອົງພຣະເຢຊູກຣິສໂຕເຈົ້າ. ດັ່ງທີ່ນັກບຸນເປົາໂລກ່າວໄວ້ໃນຈົດໝາຍເຖິງຊາວໂກຣິນໂທວ່າ: ຜູ້ທີ່ໄດ້ຊະນະຄວາມຕາຍແລະກັບເປັນຄືນມາຜູ້ທຳອິດຄືອົງພຣະເຢຊູກຣິສໂຕເຈົ້າ. ໃນທຳນອງນີ້, ແມ່ນພຣະເຢຊູເຈົ້າທີ່ທຳໃຫ້ມານດາຂອງພຣະອົງໄດ້ໄຊຊະນະຄວາມຕາຍແລະຂຶ້ນສະຫວັນທັງກາຍແລະວິນຍານຮ່ວມກັບພຣະອົງໃນເມືອງສະຫວັນ.

ຂໍໃຫ້ວາຈາຂອງພຣະເຈົ້າໃນວັນນີ້ຊ່ວຍພວກເຮົາໃຫ້ຄົ້ນພົບກັບຄວາມຍິນດີທີ່ແທ້ຈິງໃນອົງພຣະເຢຊູກຣິສໂຕເຈົ້າ.  ເພື່ອພວກເຮົາຈະໄດ້ມີພຣະເຈົ້າຢູ່ນຳໃນໂລກນີ້  ແລະໃນໂລກໜ້າກໍຈະໄດ້ຢູ່ຮ່ວມກັບພຣະອົງທັງກາຍແລະວິນຍານເໝືອນກັບແມ່ພຣະນັ້ນເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ